WISCONSIN DEPARTMENT of HEALTH SERVICES

DEPARTMENT OF HEALTH SERVICES
Division of Medicaid Services
P-02483L (12/2019)

# ບັດຄະແນນ Fiscal Employer Agent (FEA)
# ຄໍາຖາມທີ່ຖາມເລື້ອຍໆ

## ຈຸດປະສົງຂອງບັດຄະແນນນີ້ແມ່ນຫຍັງ?

ຈຸດປະສົງຂອງບັດຄະແນນແມ່ນເພື່ອຊ່ວຍທ່ານເລືອກ IRIS fiscal employer agent (FEA) ອີງຕາມປັດໃຈຕ່າງໆທີ່ສໍາຄັນທີ່ສຸດຕໍ່ທ່ານ. ບັດຄະແນນໃຫ້ຂໍ້ມູນແກ່ທ່ານກ່ຽວກັບວ່າ ສະມາຊິກປັດຈຸບັນມີຄວາມຮູ້ສຶກກ່ຽວກັບ FEA ຂອງພວກເຂົາແນວໃດ. ນອກນັ້ນບັດຄະແນນຍັງໃຫ້ຂໍ້ມູນຕິດຕໍ່ ແລະ ຂໍ້ເທັດຈິງອື່ນໆກ່ຽວກັບ FEAs ທີ່ມີໃຫ້ທ່ານເລືອກໄດ້.

## ຂໍ້ມູນຢູ່ໃນບັດຄະແນນມາຈາກໃສ?

ຂໍ້ມູນຢູ່ໃນພາກການສໍາຫຼວດຜູ້ເຂົ້າຮ່ວມຈາກການສໍາຫຼວດຄວາມພໍໃຈຂອງຜູ້ເຂົ້າຮ່ວມປີ 2018 ຂອງລັດ. ຂໍ້ເທັດຈິງຂອງອົງການຈັດຕັ້ງຢູ່ໃນພາກຂໍ້ມູນເພີ່ມເຕີມມາຈາກ FEA ໂດຍກົງ.

## ການສໍາຫຼວດຄວາມພໍໃຈຂອງຜູ້ເຂົ້າຮ່ວມແມ່ນຫຍັງ?

ການສໍາຫຼວດຄວາມພໍໃຈຂອງຜູ້ເຂົ້າຮ່ວມແມ່ນການເກັບກໍາຄໍາຖາມປະຈໍາປີທີ່ໄດ້ສົ່ງໄປໃຫ້ສະມາຊິກຂອງແຕ່ລະ FEA ໃນປັດຈຸບັນເພື່ອເກັບກໍາຄໍາຕິຊົມກ່ຽວກັບປະສົບການຂອງພວກເຂົາກັບ FEA ຂອງພວກເຂົາ. ລັດເກັບເອົາ ແລະ ວິເຄາະຄໍາຕອບການສໍາຫຼວດເພື່ອໃຫ້ຮູ້ວ່າ ຜູ້ເຂົ້າຮ່ວມມີຄວາມພໍໃຈກັບ FEA ຂອງພວກເຂົາແນວໃດ ແລະ FEA ຊ່ວຍໃຫ້ພວກເຂົາບັນລຸໄດ້ຕາມຄວາມຕ້ອງການຂອງພວກເຂົາແນວໃດ.

## ບໍ່ຫວັງຜົນກໍາໄລ ແລະ ຫວັງຜົນກໍາໄລໝາຍຄວາມວ່າແນວໃດ?

ປະເພດຂອງພາກໜ່ວຍງານຢູ່ໃນບັດຄະແນນອະທິບາຍໃຫ້ຮູ້ວ່າ ແຕ່ລະ MCO ແມ່ນອົງການປະເພດໃດ. ອົງການບໍ່ຫວັງຜົນກໍາໄລແມ່ນກຸ່ມທີ່ຈັດຕັ້ງຂຶ້ນມາເພື່ອຈຸດປະສົງທີ່ບໍ່ແມ່ນການສ້າງຜົນກໍາໄລ ແລະ ບໍ່ມີລາຍຮັບຂອງອົງການສ່ວນໃດຖືກນໍາໄປແບ່ງປັນໃຫ້ກັບບັນດາຫົວໜ້າ ຫຼື ພະນັກງານອົງການ. ສໍາລັບອົງການຫວັງຜົນກໍາໄລແມ່ນທຸລະກິດທີ່ດໍາເນີນເພື່ອຈຸດປະສົງຂອງການສ້າງຜົນກໍາໄລ.

# ບັດຄະແນນ Fiscal Employer Agent (FEA)

## ຄູ່ມືແນະນຳລະບົບວັດແທກ

<table>
<tr><th colspan="2">ການສຳຫຼວດຜູ້ເຂົ້າຮ່ວມ</th></tr>
<tr><th>ລະບົບວັດແທກ</th><th>ຄວາມພໍໃຈໂດຍລວມ</th></tr>
<tr><td>ແຫຼ່ງຂໍ້ມູນ</td><td>ການສຳຫຼວດຄວາມພໍໃຈປະຈຳປີ 2018—<br>ຄະແນນລວມດ້ວຍການໃຊ້ຂໍ້ມູນຈາກຄຳຖາມການສຳຫຼວດຕໍ່ໄປນີ້:<br>1. ທ່ານສາມາດຕິດຕໍ່ຕົວແທນນາຍຈ້າງທາງດ້ານການເງິນຂອງທ່ານໄດ້ບໍ ເມື່ອທ່ານຈຳເປັນຕ້ອງຕິດຕໍ່?<br>2. ທ່ານໄດ້ຮັບການຊ່ວຍເຫຼືອທີ່ທ່ານຕ້ອງການຈາກຕົວແທນນາຍຈ້າງທາງດ້ານການເງິນຂອງທ່ານເລື້ອຍປານໃດ?<br>3. ຕົວແທນນາຍຈ້າງທາງດ້ານການເງິນຂອງທ່ານອະທິບາຍສິ່ງຕ່າງໆໃຫ້ທ່ານໄດ້ຈະແຈ້ງປານໃດ?<br>4. ຕົວແທນນາຍຈ້າງທາງດ້ານການເງິນຂອງທ່ານຕັ້ງໃຈຮັບຟັງທ່ານດີປານໃດ?<br>5. ຕົວແທນນາຍຈ້າງທາງດ້ານການເງິນຂອງທ່ານປະຕິບັດຕໍ່ທ່ານດ້ວຍຄວາມເຄົາລົບປານໃດ?<br>6. ໂດຍລວມແລ້ວ, ທ່ານມັກຕົວແທນນາຍຈ້າງທາງດ້ານການເງິນຂອງທ່ານຫຼາຍປານໃດ?</td></tr>
<tr><td>ລະບົບການໃຫ້ຄະແນນ</td><td>
<table>
<tr><th>ຄະແນນ</th><th>ດາວ</th><th>ອັນດັບຄະແນນ</th></tr>
<tr><td>90.0% - 100.0%</td><td>5</td><td>ດີເລີດ</td></tr>
<tr><td>80.0% - 89.9%</td><td>4</td><td>ດີຫຼາຍ</td></tr>
<tr><td>70.0% - 79.9%</td><td>3</td><td>ດີ</td></tr>
<tr><td>60.0% - 69.9%</td><td>2</td><td>ປານກາງ</td></tr>
<tr><td>< 60.0%</td><td>1</td><td>ບໍ່ດີ</td></tr>
</table>
</td></tr>
</table>

<table>
<tr><td></td><td>ເປີເຊັນຂອງຄຳຕອບຄຳຖາມການສຳຫຼວດທັງໝົດທີ່ "ພໍໃຈຫຼາຍ" ຫຼື "ພໍໃຈເປັນພິເສດ."</td></tr>
<tr><th>ລະບົບວັດແທກ</th><th>ການຕອບຮັບ</th></tr>
<tr><td>ແຫຼ່ງຂໍ້ມູນ</td><td>ການສຳຫຼວດຄວາມພໍໃຈປະຈຳປີ 2018—ຄະແນນລວມດ້ວຍການໃຊ້ຂໍ້ມູນຈາກຄຳຖາມການສຳຫຼວດຕໍ່ໄປນີ້:<br>1. ທ່ານສາມາດຕິດຕໍ່ຕົວແທນນາຍຈ້າງທາງດ້ານການເງິນຂອງທ່ານໄດ້ບໍ ເມື່ອທ່ານຈຳເປັນຕ້ອງຕິດຕໍ່?<br>2. ທ່ານໄດ້ຮັບການຊ່ວຍເຫຼືອທີ່ທ່ານຕ້ອງການຈາກຕົວແທນນາຍຈ້າງທາງດ້ານການເງິນເລື້ອຍປານໃດ?</td></tr>
<tr><td>ລະບົບການໃຫ້ຄະແນນ</td><td>
<table>
<tr><th>ຄະແນນ</th><th>ດາວ</th><th>ອັນດັບຄະແນນ</th></tr>
<tr><td>90.0% - 100.0%</td><td>5</td><td>ດີເລີດ</td></tr>
<tr><td>80.0% - 89.9%</td><td>4</td><td>ດີຫຼາຍ</td></tr>
<tr><td>70.0% - 79.9%</td><td>3</td><td>ດີ</td></tr>
<tr><td>60.0% - 69.9%</td><td>2</td><td>ປານກາງ</td></tr>
<tr><td>< 60.0%</td><td>1</td><td>ບໍ່ດີ</td></tr>
</table>
ເປີເຊັນຂອງຄຳຕອບຄຳຖາມການສຳຫຼວດທີ່ "ພໍໃຈຫຼາຍ" ຫຼື "ພໍໃຈເປັນພິເສດ."</td></tr>
<tr><th>ລະບົບວັດແທກ</th><th>ຄຸນນະພາບຂອງການສື່ສານ</th></tr>
<tr><td>ແຫຼ່ງຂໍ້ມູນ</td><td>ການສຳຫຼວດຄວາມພໍໃຈປະຈຳປີ 2018—ຄະແນນລວມດ້ວຍການໃຊ້ຂໍ້ມູນຈາກຄຳຖາມການສຳຫຼວດຕໍ່ໄປນີ້:<br>1. ຕົວແທນນາຍຈ້າງທາງດ້ານການເງິນຂອງທ່ານອະທິບາຍສິ່ງຕ່າງໆໃຫ້ທ່ານໄດ້ຈະແຈ້ງປານໃດ?</td></tr>
</table>

<table>
<tr><td></td><td>2. ຕົວແທນນາຍຈ້າງທາງດ້ານການເງິນຂອງທ່ານຕັ້ງໃຈຮັບຟັງທ່ານດີປານໃດ ?<br>3. ຕົວແທນນາຍຈ້າງທາງດ້ານການເງິນຂອງທ່ານປະຕິບັດຕໍ່ທ່ານດ້ວຍຄວາມເຄົາລົບປານໃດ?</td></tr>
<tr><td>ລະບົບການໃຫ້ຄະແນນ</td><td>
<table>
<tr><th>ຄະແນນ</th><th>ດາວ</th><th>ອັນດັບຄະແນນ</th></tr>
<tr><td>90.0% - 100.0%</td><td>5</td><td>ດີເລີດ</td></tr>
<tr><td>80.0% - 89.9%</td><td>4</td><td>ດີຫຼາຍ</td></tr>
<tr><td>70.0% - 79.9%</td><td>3</td><td>ດີ</td></tr>
<tr><td>60.0% - 69.9%</td><td>2</td><td>ປານກາງ</td></tr>
<tr><td>< 60.0%</td><td>1</td><td>ບໍ່ດີ</td></tr>
</table>
ເປີເຊັນຂອງຄຳຕອບຄຳຖາມການສຳຫຼວດທີ່ “ພໍໃຈຫຼາຍ” ຫຼື “ພໍໃຈເປັນພິເສດ.”</td></tr>
</table>